ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ.......092......./ປປທ

ນະຄອນຫຼວງວຽງຈັນ, ວັນທີ......30 ສິງຫາ 2023.

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍເຍົາວະຊົນລາວ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 86/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍເຍົາວະຊົນລາວ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ຄປຈ, ລົງວັນທີ 15 ສິງຫາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍເຍົາວະຊົນລາວ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 86 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

## ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍເຍົາວະຊົນລາວ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍເຍົາວະຊົນລາວ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 7 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 17 ກໍລະກົດ 2023.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍເຍົາວະຊົນລາວ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປະທານສະພາແຫ່ງຊາດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 36 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍເຍົາວະຊົນລາວ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ ກວດກາ ການປົກປ້ອງ, ການສົ່ງເສີມ ແລະ ພັດທະນາເຍົາວະຊົນລາວ ເພື່ອເຕົ້າໂຮມ, ສຶກສາອົບຮົມ ແລະ ປູກຈິດສຳນຶກ ເຍົາວະຊົນລາວ ໃຫ້ມີ ຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ມີນ້ຳໃຈຮັກຊາດ, ມີລະບຽບວິໄນ, ຮູ້ວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ແນໃສ່ ສ້າງຄວາມສາມັກຄີ, ມີຄວາມຕື່ນຕົວຫ້າວຫັນ, ມີຄ່ານິຍົມຖືກຕ້ອງ ກາຍເປັນທີ່ແໜງຜູ້ສືບທອດທີ່ດີຂອງຊາດ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ເຍົາວະຊົນລາວ

ເຍົາວະຊົນລາວ ແມ່ນ ເດັກທີ່ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ ເກົ້າປີ ຂຶ້ນໄປ ແຕ່ບໍ່ເຖິງ ສິບຫ້າປີ ໂດຍບໍ່ຈຳແນກເພດ, ເຜົ່າ, ສາສະໜາ, ການເຊື່ອຖື, ຖານະທາງສັງຄົມ ແລະ ຄວາມບົກພ່ອງທາງດ້ານຮ່າງກາຍ ແລະ ຈິດໃຈ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຍົາວະຊົນຫົວອາ** ໝາຍເຖິງ ເຍົາວະຊົນລາວ ທີ່ເປັນສະມາຊິກຂອງການຈັດຕັ້ງເຍົາວະຊົນຫົວອາ;
2. **ອະນຸຊົນລາວ** ໝາຍເຖິງ ເດັກນ້ອຍລາວບັນດາເຜົ່າ ທີ່ມີອາຍຸແຕ່ ຫົກປີ ຂຶ້ນໄປ ແຕ່ບໍ່ເຖິງ ເກົ້າປີ;
3. **ອະນຸຊົນຫົວອາ** ໝາຍເຖິງ ອະນຸຊົນລາວ ທີ່ການຈັດຕັ້ງຊາວໜຸ່ມຮັບເປັນສະມາຊິກອະນຸຊົນຫົວອາ;
4. **ແບບແຜນການຈັດຕັ້ງເຍົາວະຊົນຫົວອາ** ໝາຍເຖິງ ຮູບແບບການເຄື່ອນໄຫວສະເພາະ ຂອງກອງເຍົາວະຊົນຫົວອາ ເປັນຕົ້ນ ການຕັ້ງຄ້າຍເຍົາວະຊົນຫົວອາ, ພິທີຮັບເຍົາວະຊົນຫົວອາ, ການເສບກອງດຸລິຍາງ;
5. **ສິ່ງມຶນເມົາ** ໝາຍເຖິງ ວັດຖຸ ທີ່ມີທາດເຫຼົ້າ ຫຼື ທາດເບື່ອ ປະສົມຢູ່ນຳ ທີ່ເສບແລ້ວ ຈະເຮັດໃຫ້ເກີດອາການມຶນເມົາ;

6. **ຢາເສບຕິດ** ໝາຍເຖິງ ສານກະຕຸ້ນ ຫຼື ລະງັບລະບົບປະສາດ ທີ່ໄດ້ມາຈາກພືດທີ່ໃຫ້ສານເສບຕິດ ຫຼື ຈາກການສັງເຄາະສານເຄມີ ເມື່ອເສບແລ້ວ ຈະມີຜົນກະທົບຢ່າງຮຸນແຮງຕໍ່ຮ່າງກາຍ, ຈິດປະສາດ ແລະ ຈະມີຄວາມຕ້ອງການເສບເພີ່ມຂຶ້ນເລື້ອຍໆ;

7. **ສິ່ງເສບຕິດ** ໝາຍເຖິງ ສິ່ງກະຕຸ້ນຕໍ່ລະບົບປະສາດ ຫຼື ອາລົມຈິດ ຈາກສິ່ງວັດຖຸ, ພຶດຕິກຳຂອງຄົນ ຫຼື ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ໂດຍມີຜົນກະທົບທາງລົບຢ່າງຮ້າຍແຮງ ຕໍ່ຮ່າງກາຍ ແລະ ຈິດປະສາດ;

8. **ສື່ສັງຄົມອອນລາຍ** ໝາຍເຖິງ ສື່ປະເພດໜຶ່ງ ທີ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຊ້ສື່ສານກັນຜ່ານລະບົບເຄືອຂ່າຍອິນເຕີເນັດ ເພື່ອ ເຜີຍແຜ່ຂໍ້ມູນ ຂ່າວສານ ສູ່ສາທາລະນະດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນ;

9. **ອາວຸດ** ໝາຍເຖິງ ອຸປະກອນ, ເຄື່ອງມື, ພາຫະນະ ຫຼື ລະບົບພາຫະນະ ທີ່ສ້າງຂຶ້ນ ຫຼື ນຳໃຊ້ ໃນການປ້ອງກັນ, ຕໍ່ສູ້, ທຳຮ້າຍ ຫຼື ທຳລາຍ, ຝຶກຊ້ອມ, ແຂ່ງຂັນກິລາ ເຊັ່ນ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ;

10. **ສິ່ງເສດເຫຼືອສົງຄາມ** ໝາຍເຖິງ ລະເບີດທີ່ບໍ່ທັນແຕກ, ລູກກະສຸນ, ທາດເຄມີ ແລະ ສິ່ງເສດເຫຼືອອື່ນ ຈາກສົງຄາມ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບເຍົາວະຊົນລາວ**

ລັດ ຖືສຳຄັນ ແລະ ມີນະໂຍບາຍ ພັດທະນາ, ປົກປ້ອງ ສິດ, ຜົນປະໂຫຍດອັນຊອບທຳ ແລະ ກຳນົດກົນໄກ ກ່ຽວກັບການຄຸ້ມຄອງການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຍົາວະຊົນລາວ.

ລັດ ສ້າງໂຄງລ່າງພື້ນຖານ, ສະໜອງ ງົບປະມານ, ວັດຖຸປະກອນ, ເຕັກນິກທີ່ຈຳເປັນໃຫ້ເຍົາວະຊົນລາວໄດ້ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນ ຂອງຕົນ.

ລັດ ຊຸກຍູ້, ສົ່ງເສີມ ເຍົາວະຊົນລາວ ໃຫ້ໄດ້ຮັບການ ສຶກສາ, ຝຶກອົບຮົມ, ທັດສະນະສຶກສາ, ໄດ້ຮັບ ຂໍ້ມູນຂ່າວສານ, ເຂົ້າເຖິງການບໍລິການຕາມໄວຂອງເຍົາວະຊົນລາວ ທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາເຍົາວະຊົນລາວ.

**ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວວຽກງານເຍົາວະຊົນລາວ**

ວຽກງານເຍົາວະຊົນລາວ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

2. ສອດຄ່ອງກັບ ແຜນຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນລາວໃນແຕ່ລະໄລຍະ;

3. ປະຕິບັດພາລະບົດບາດຂອງຕົນພາຍໃຕ້ການນຳພາ ຊີ້ນຳຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

4. ສອດຄ່ອງກັບ ໄລຍະຂະຫຍາຍຕົວ ທາງດ້ານຮ່າງກາຍ, ມັນສະໝອງ ແລະ ຈິດໃຈ ຂອງເຍົາວະຊົນລາວ;

5. ສອດຄ່ອງກັບ ສົນທິສັນຍາວ່າດ້ວຍສິດທິເດັກ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ, ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບເຍົາວະຊົນລາວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຢົາວະຊົນລາວ ບົນພື້ນຖານ ແນວທາງ ນະໂຍບາຍ ການຕ່າງປະເທດ ຂອງ ສປປ ລາວ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ສຶກສາ ແລະ ກິລາ, ສາທາລະນະສຸກ, ສິລະປະ, ວັດທະນະທຳ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ, ການຍົກລະດັບຄວາມຮູ້ທາງດ້ານວິຊາການ ແລະ ການຊ່ວຍເຫຼືອອື່ນ ເພື່ອພັດທະນາ ເຢົາວະຊົນລາວ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ເຢົາວະຊົນລາວ

ມາດຕາ 8 ຄວາມສຳຄັນຂອງເຢົາວະຊົນລາວ

ເຢົາວະຊົນລາວ ແມ່ນ ຊັບພະຍາກອນມະນຸດທີ່ເປັນຍຸດທະສາດ, ເປັນທຶນຮອນອັນປະເສີດ ທີ່ລ້ຳຄ່າ, ເປັນຫົ່ນແຫນງ ທີ່ດີຂອງຊາດ, ເປັນຮຸ່ນຄົນສືບທອດທີ່ສຳຄັນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນອະນາຄົດ.

ມາດຕາ 9 ປະເພດເຢົາວະຊົນລາວ

ການຈັດແບ່ງປະເພດເຢົາວະຊົນລາວ ແມ່ນ ເພື່ອປົກປ້ອງ, ສົ່ງເສີມ ແລະ ພັດທະນາ ໃຫ້ເໝາະສົມກັບແຕ່ລະປະເພດ.

ເຢົາວະຊົນລາວ ໄດ້ຈັດເປັນປະເພດ ດັ່ງນີ້:

1. ເຢົາວະຊົນລາວ ທີ່ເປັນນັກຮຽນ;
2. ເຢົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ;
3. ເຢົາວະຊົນລາວ ທີ່ປະລະການຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ;
4. ເຢົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ;
5. ເຢົາວະຊົນລາວ ທີ່ພິການ;
6. ເຢົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ;
7. ເຢົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ;
8. ເຢົາວະຊົນລາວ ທີ່ຕິດສິ່ງເສບຕິດ;
9. ເຢົາວະຊົນລາວ ທີ່ກະທຳຜິດ.

ໃນກໍລະນີຈຳເປັນ ໂດຍອີງໃສ່ສະພາບຄວາມເປັນຈິງໃນແຕ່ລະໄລຍະ ອາດຈະກຳນົດເຢົາວະຊົນລາວ ປະເພດ ອື່ນອີກ ກໍໄດ້.

ມາດຕາ 10 ເຢົາວະຊົນລາວ ທີ່ເປັນນັກຮຽນ

ເຢົາວະຊົນລາວ ທີ່ເປັນນັກຮຽນ ແມ່ນ ຜູ້ກຳລັງຮຽນ ຢູ່ໂຮງຮຽນສາມັນສຶກສາ ຊຶ່ງປະກອບດ້ວຍ ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 11 ເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ**

ເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ ແມ່ນ ຜູ້ມີຄວາມຮູ້ ຄວາມສາມາດພິເສດ ທາງດ້ານ ການສຶກສາ, ວິທະຍາສາດ, ເຕັກໂນໂລຊີ, ພາສາຕ່າງປະເທດ, ການປະດິດຄິດແຕ່ງ, ກິລາ, ສິລະປະ ແລະ ການປະຕິບັດຕົວຈິງ.

**ມາດຕາ 12 ເຍົາວະຊົນລາວ ທີ່ປະລະການຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ**

ເຍົາວະຊົນລາວ ທີ່ປະລະການຮຽນ ແມ່ນ ຜູ້ຢູ່ໃນເກນອາຍຸເຂົ້າຮຽນພາກບັງຄັບທີ່ເຄີຍເຂົ້າໂຮງຮຽນມາກ່ອນ ແຕ່ໄດ້ອອກຈາກໂຮງຮຽນ ໂດຍບໍ່ໄປຮຽນຕໍ່ຢູ່ສະຖານການສຶກສາອື່ນ ແລະ ບໍ່ກັບຄືນເຂົ້າໂຮງຮຽນ ຕາມປົກກະຕິ.

ເຍົາວະຊົນລາວທີ່ບໍ່ໄດ້ເຂົ້າໂຮງຮຽນ ແມ່ນ ຜູ້ບໍ່ມີໂອກາດໄດ້ເຂົ້າຮໍ່າຮຽນໃນໂຮງຮຽນສາມັນສຶກສາ ຕາມເກນອາຍຸໄວຮຽນ.

**ມາດຕາ 13 ເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ**

ເຍົາວະຊົນລາວ ທີ່ດ້ອຍໂອກາດ ແມ່ນ ຜູ້ຂາດເຂີນ ແລະ ມີຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ, ສັງຄົມ, ການເຂົ້າເຖິງ ຂໍ້ມູນ ຂ່າວສານ, ການຄົມມະນາຄົມ, ການສຶກສາ ແລະ ສາທາລະນະສຸກ.

ເຍົາວະຊົນລາວ ທີ່ຖືກປະລະ ແມ່ນ ຜູ້ຂາດການເອົາໃຈໃສ່ເບິ່ງແຍງ ລ້ຽງດູ, ສຶກສາອົບຮົມ, ສົ່ງເສີມ, ສະໜອງເງື່ອນໄຂທີ່ຈຳເປັນໃນການພັດທະນາ ຈາກ ພໍ່ ແມ່ ຫຼື ຜູ້ປົກຄອງ ເຊັ່ນ ດ້ານສຸຂະພາບ, ໂພຊະນາການທີ່ພຽງພໍ ແລະ ຖືກຫຼັກອະນາໄມ, ດ້ານທີ່ຢູ່ອາໄສທີ່ປອດໄພ, ດ້ານການສຶກສາ, ການພັດທະນາທາງດ້ານຈິດໃຈ ບົນພື້ນຖານເງື່ອນໄຂທາງດ້ານເສດຖະກິດຂອງຄອບຄົວ.

ເຍົາວະຊົນລາວ ທີ່ຖືກປະຖິ້ມ ແມ່ນ ຜູ້ຖືກປ່ອຍປະຈາກພໍ່ແມ່ ຫຼື ຜູ້ປົກຄອງ ໃນການຄຸ້ມຄອງເບິ່ງແຍງ ລ້ຽງດູ.

**ມາດຕາ 14 ເຍົາວະຊົນລາວ ທີ່ພິການ**

ເຍົາວະຊົນລາວ ທີ່ພິການ ແມ່ນ ຜູ້ມີຄວາມບົກພ່ອງທາງດ້ານຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງຄອບຄົວ ແລະ ສັງຄົມ ໄດ້ຢ່າງເຕັມສ່ວນ.

**ມາດຕາ 15 ເຍົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ເຍົາວະຊົນລາວ ທີ່ມີຄວາມສ່ຽງ ແມ່ນ ຜູ້ດຳລົງຊີວິດ, ສຶກສາຮໍ່າຮຽນ ຢູ່ໃນສະພາບແວດລ້ອມ ທີ່ກຳລັງຈະຕົກຢູ່ໃນຄວາມອັນຕະລາຍ ຕໍ່ ຊີວິດ, ສຸຂະພາບ ທາງດ້ານຮ່າງກາຍ ແລະ ຈິດໃຈ.

ເຍົາວະຊົນລາວ ທີ່ຖືກເຄາະຮ້າຍ ແມ່ນ ຜູ້ໄດ້ຮັບຜົນກະທົບໂດຍກົງຈາກ ໄພພິບັດທາງທຳມະຊາດ, ພະຍາດລະບາດ, ການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ສິ່ງເສດເຫຼືອສົງຄາມ, ສິ່ງເສບຕິດ ແລະ ອຸບປະຕິເຫດ.

**ມາດຕາ 16 ເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ**

ເຍົາວະຊົນລາວ ທີ່ກຳພ້າ ແມ່ນ ຜູ້ທີ່ ພໍ່ ຫຼື ແມ່ ໄດ້ເສຍຊີວິດ;

ເຍົາວະຊົນລາວ ທີ່ກຳພອຍ ແມ່ນ ຜູ້ທີ່ ພໍ່ ແລະ ແມ່ ໄດ້ເສຍຊີວິດ.

**ມາດຕາ 17 ເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ**

ເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ ແມ່ນ ຜູ້ເສບ ຫຼື ຊົມໃຊ້ສິ່ງເສບຕິດຢ່າງຕໍ່ເນື່ອງ ແລະ ຂາດບໍ່ໄດ້ ເປັນຕົ້ນ ຢາເສບຕິດ, ສິ່ງມຶນເມົາ, ຕິດເກມ, ການພະນັນ, ສື່ສັງຄົມອອນລາຍ ທີ່ ບໍ່ຖືກຕ້ອງ ແລະ ບໍ່ເໝາະສົມ.

ມາດຕາ 18 ເຍົາວະຊົນລາວ ທີ່ກະທໍາຜິດ

ເຍົາວະຊົນລາວ ທີ່ກະທໍາຜິດ ແມ່ນ ຜູ້ມີພຶດຕິກໍາສ້າງຄວາມເສຍຫາຍ ຕໍ່ ຊີວິດ, ສຸຂະພາບ ຫຼື ຊັບສິນຂອງຕົນເອງ, ຄອບຄົວ, ບຸກຄົນອື່ນ ແລະ ສັງຄົມ.

## ພາກທີ III

## ການປົກປ້ອງ, ການສົ່ງເສີມ ແລະ ການພັດທະນາ ເຍົາວະຊົນລາວ

### ໝວດທີ 1

### ການປົກປ້ອງເຍົາວະຊົນລາວ

ມາດຕາ 19 **ການປົກປ້ອງເຍົາວະຊົນລາວ**

ການປົກປ້ອງເຍົາວະຊົນລາວ ແມ່ນ ການນໍາໃຊ້ມາດຕະການ, ວິທີການ ໃນການປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຍົາວະຊົນລາວ.

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ໃຫ້ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຍົາວະຊົນລາວ ແຕ່ລະປະເພດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການ ສ້າງນິຕິກໍາ, ໃຫ້ຄໍາປຶກສາ, ໂຄສະນາ, ສຶກສາອົບຮົມ ແລະ ປຸກຈິດສໍານຶກ ຕາມແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ນອກຈາກທີ່ໄດ້ຮັບການປົກປ້ອງຕາມທີ່ໄດ້ກໍານົດໄວ້ໃນວັກທີສອງ ຂອງມາດຕານີ້ແລ້ວ ສໍາລັບ ເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ, ເຍົາວະຊົນລາວ ທີ່ພິການ, ເຍົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ, ເຍົາວະຊົນລາວ ທີ່ກໍາພ້າ ແລະ ກໍາພອຍ, ເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ, ເຍົາວະຊົນລາວ ທີ່ກະທໍາຜິດ ຍັງໄດ້ຮັບການປົກປ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ຫາ ມາດຕາ 25 ຂອງກົດໝາຍສະບັບນີ້.

ມາດຕາ 20 **ການປົກປ້ອງເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ ດ້ວຍການຄຸ້ມຄອງ, ການດູແລ, ການປິ່ນປົວ, ການຊ່ວຍເຫຼືອ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄວາມສະເໝີພາບ, ການບໍ່ຈໍາແນກ, ບໍ່ລັງກຽດ, ບໍ່ເຍາະເຍີ້ຍ, ບໍ່ສຽດສີ, ບໍ່ກີດກັ້ນ, ບໍ່ນິນທາ ທຸກຮູບແບບ.

ມາດຕາ 21 **ການປົກປ້ອງເຍົາວະຊົນລາວ ທີ່ພິການ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເຍົາວະຊົນລາວ ທີ່ພິການ ດ້ວຍການ ຄຸ້ມຄອງ, ການດູແລ, ການປິ່ນປົວ, ການຊ່ວຍເຫຼືອ ແລະ ໃຫ້ຄວາມສະເໝີພາບ ຕາມກົດໝາຍ.

ມາດຕາ 22 **ການປົກປ້ອງເຍົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງເຍົາວະຊົນລາວ ທີ່ມີຄວາມສ່ຽງ ດ້ວຍການໃຫ້ ຂໍ້ມູນ ຂ່າວສານທີ່ຖືກຕ້ອງ ເພື່ອຫຼີກລ່ຽງຄວາມອັນຕະລາຍ ຕໍ່ ຊີວິດ ແລະ ສຸຂະພາບ.

ສຳລັບການປົກປ້ອງເຍົາວະຊົນລາວ ທີ່ຖືກເຄາະຮ້າຍ ຕ້ອງໃກ້ຊິດຕິດແທດ, ໃຫ້ກຳລັງໃຈ, ໃຫ້ຄວາມອົບອຸ່ນ, ໃຫ້ການຊ່ວຍເຫຼືອ, ໃຫ້ການບໍລິການດ້ານສຸຂະພາບ ເພື່ອເຮັດໃຫ້ສຸຂະພາບຮ່າງກາຍ ແລະ ຈິດໃຈດີຂຶ້ນ.

**ມາດຕາ 23 ການປົກປ້ອງເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ຜູ້ປົກຄອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ ໂດຍບໍ່ໃຫ້ມີປົມດ້ອຍ ດ້ວຍການໃຫ້ໄດ້ຮັບຄວາມຮັກ, ຄວາມອົບອຸ່ນ ແລະ ໃຫ້ການຊ່ວຍເຫຼືອ ເພື່ອໃຫ້ມີໂອກາດພັດທະນາຕົນເອງ.

**ມາດຕາ 24 ການປົກປ້ອງເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ ດ້ວຍການໃຫ້ການຊ່ວຍເຫຼືອ ເພື່ອອອກຈາກສິ່ງເສບຕິດ.

**ມາດຕາ 25 ການປົກປ້ອງເຍົາວະຊົນລາວ ທີ່ກະທຳຜິດ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຍົາວະຊົນລາວ ທີ່ກະທຳຜິດ ດ້ວຍການບົ່ມສອນສິ່ງທີ່ດີ, ເປັນປະໂຫຍດ ແລະ ຝຶກວິຊາຊີບ ເພື່ອບໍ່ໃຫ້ກັບຄືນມາກະທຳຜິດ.

## ໝວດທີ 2
## ການສົ່ງເສີມເຍົາວະຊົນລາວ

**ມາດຕາ 26 ການສົ່ງເສີມເຍົາວະຊົນລາວ**

ການສົ່ງເສີມເຍົາວະຊົນລາວ ແມ່ນ ການກຳນົດນະໂຍບາຍ, ກົນໄກ, ລະບຽບການ ເພື່ອສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອເຍົາວະຊົນລາວ.

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການສົ່ງເສີມເຍົາວະຊົນລາວ ແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການ ສຶກສາອົບຮົມ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອ ແລະ ການດູແລ ເຍົາວະຊົນລາວ ໄດ້ຮັບການຍົກລະດັບ ຄວາມຮູ້, ຄວາມສາມາດ, ພອນສະຫວັນ, ຫົວຄິດປະດິດສ້າງ, ສະໜອງ ຂໍ້ມູນ ຂ່າວສານທີ່ຖືກຕ້ອງ, ເຂົ້າເຖິງການບໍລິການດ້ານສຸຂະພາບ, ສະຫວັດດີການສັງຄົມ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນ.

ນອກຈາກທີ່ໄດ້ຮັບການສົ່ງເສີມຕາມທີ່ໄດ້ກຳນົດໄວ້ໃນວັກທີສອງ ຂອງມາດຕານີ້ແລ້ວ ສຳລັບເຍົາວະຊົນລາວ ທີ່ເປັນນັກຮຽນ, ເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ, ເຍົາວະຊົນລາວ ທີ່ປະລະການຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ, ເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ, ເຍົາວະຊົນລາວ ທີ່ພິການ, ເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ ຍັງໄດ້ຮັບການສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຫາ ມາດຕາ 32 ຂອງກົດໝາຍສະບັບນີ້.

**ມາດຕາ 27 ການສົ່ງເສີມເຍົາວະຊົນລາວ ທີ່ເປັນນັກຮຽນ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ສະຖານການສຶກສາ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ເປັນນັກຮຽນ ດ້ວຍການ ສິດສອນ, ປູກຈິດສຳນຶກ ໃຫ້ຮັກການຮຽນ, ຕັ້ງໃຈຮຽນ, ຮຽນເກັ່ງ, ຮຽນໃຫ້ຈົບ, ມີຄວາມມຸ່ງຫວັງໃນການຮຽນຕໍ່ ແລະ ຮຽນຕະຫຼອດໄປ.

**ມາດຕາ 28 ການສົ່ງເສີມເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ສະຖານການສຶກສາ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ ດ້ວຍການ ໃຫ້ບຸລິມະສິດໄດ້ຮັບທຶນການສຶກສາ, ທັດສະນະສຶກສາ, ເຂົ້າເຖິງແຫຼ່ງທຶນ, ເບັຍລ້ຽງ, ຍ້ອງຍໍ ສົມລະເສີນ, ສ້າງເງື່ອນໄຂຄວາມສະດວກ ໃນການສຶກສາ ແລະ ການປະດິດສ້າງໃໝ່.

**ມາດຕາ 29 ການສົ່ງເສີມເຍົາວະຊົນລາວ ທີ່ປະລະການຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ສະຖານການສຶກສາ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ປະລະການຮຽນ ດ້ວຍການ ປຸກຈິດສຳນຶກ, ປຸກລະດົມ ແລະ ອົບຮົມເພື່ອໃຫ້ກັບຄືນສູ່ລະບົບການຮຽນເປັນປົກກະຕິ.

ສຳລັບການສົ່ງເສີມເຍົາວະຊົນລາວ ທີ່ບໍ່ໄດ້ເຂົ້າໂຮງຮຽນນັ້ນ ຕ້ອງຊຸກຍູ້, ປຸກລະດົມ ແລະ ໃຫ້ນະໂຍບາຍເຂົ້າເຖິງການຮຽນ, ການສຶກສາ ເພື່ອອະນາຄົດຂອງຕົນເອງ.

**ມາດຕາ 30 ການສົ່ງເສີມເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ ດ້ວຍການ ຊ່ວຍເຫຼືອດ້ານຕ່າງໆ ເປັນຕົ້ນ ບ່ອນຢູ່ອາໄສ, ການປິ່ນປົວ, ໂພຊະນາການ, ເຄື່ອງນຸ່ງຫົ່ມ, ອຸປະກອນການຮຽນ, ໄດ້ເຂົ້າເຖິງການສຶກສາ ເພື່ອກາຍເປັນພົນລະເມືອງດີ.

**ມາດຕາ 31 ການສົ່ງເສີມເຍົາວະຊົນລາວ ທີ່ພິການ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ພິການ ດ້ວຍການຊ່ວຍເຫຼືອດ້ານອຸປະກອນຮັບໃຊ້ສະເພາະ, ການເຂົ້າເຖິງ ຂໍ້ມູນ ຂ່າວສານ, ສ້າງຄວາມສະດວກຢູ່ສະຖານການສຶກສາ ແລະ ສະຖານທີ່ສາທາລະນະ.

**ມາດຕາ 32 ການສົ່ງເສີມເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ຜູ້ປົກຄອງ, ບຸກຄົນ, ນິຕິບຸກຄົນ ແລະ ສະຖານການສຶກສາ ມີໜ້າທີ່ສົ່ງເສີມເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ ດ້ວຍການຄຸ້ມຄອງ, ໃຫ້ການສຶກສາ, ປຸກຈິດສຳນຶກ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄວາມສະເໝີພາບ ແລະ ໃຫ້ຄຳປຶກສາຢ່າງເທົ່າທຽມກັນກັບຜູ້ອື່ນ.

## ໝວດທີ 3
## ການພັດທະນາເຍົາວະຊົນລາວ

**ມາດຕາ 33 ການພັດທະນາເຍົາວະຊົນລາວ**

ການພັດທະນາເຍົາວະຊົນລາວ ແມ່ນ ການກຳນົດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເພື່ອສ້າງ ແລະ ຝຶກຝົນຫຼໍ່ຫຼອມເຍົາວະຊົນລາວໃຫ້ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ ແລະ ສຸຂະພາບສົມບູນ.

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ເອົາໃຈໃສ່ພັດທະນາເຍົາວະຊົນລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການ ໃຫ້ໂອກາດ, ອຳນວຍ

ຄວາມສະດວກ ແລະ ສ້າງເງື່ອນໄຂ ໄດ້ຮັບການບຳລຸງຮ່າງກາຍ ແລະ ຈິດໃຈ ໃຫ້ເຂັ້ມແຂງ, ໄດ້ຮັບການສຶກສາ, ໄດ້ຮຽນພາສາຕ່າງປະເທດ, ໄດ້ຮຽນພື້ນຖານ ດ້ານເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ ແລະ ດ້ານອື່ນ.

**ມາດຕາ 34 ການພັດທະນາເຍົາວະຊົນລາວ ທີ່ເປັນນັກຮຽນ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສະຖານການສຶກສາ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ ເປັນນັກຮຽນ ທາງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ, ຄວາມຮູ້, ຄວາມສາມາດ ໃຫ້ເປັນນັກຮຽນດີ, ນັກຮຽນເກັ່ງ, ຮຽນໃຫ້ຈົບ, ມີວິໄນ ແລະ ມາລະຍາດດີ.

**ມາດຕາ 35 ການພັດທະນາເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສະຖານການສຶກສາ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ມີພອນສະຫວັນ ແລະ ຫົວຄິດປະດິດສ້າງ ດ້ວຍການສ້າງສິ່ງອຳນວຍຄວາມສະດວກ ໃນການຮ່ຳຮຽນ, ການປະດິດຄິດແຕ່ງ, ກ້າສະແດງອອກ ເພື່ອກາຍເປັນຕົວແບບທີ່ດີ.

**ມາດຕາ 36 ການພັດທະນາເຍົາວະຊົນລາວ ທີ່ປະລະການຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສະຖານການສຶກສາ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ປະລະການຮຽນ ດ້ວຍການ ປຸກລະດົມ, ໃຫ້ຄວາມຊ່ວຍເຫຼືອ, ສ້າງເງື່ອນໄຂ ເພື່ອກັບຄືນສູ່ການຮຽນປົກກະຕິ ຫຼື ໃຫ້ການຝຶກອົບຮົມ ທັກສະ, ຄວາມຮູ້, ຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດໃນການເຄື່ອນໄຫວ ແລະ ການດຳລົງຊີວິດ.

ສຳລັບການພັດທະນາເຍົາວະຊົນລາວ ທີ່ບໍ່ໄດ້ເຂົ້າໂຮງຮຽນນັ້ນ ຕ້ອງຊຸກຍູ້ ປຸກລະດົມ ໃຫ້ເຂົ້າໃຈຄວາມສຳຄັນຂອງການສຶກສາ ພ້ອມທັງໃຫ້ການຊ່ວຍເຫຼືອ ແລະ ສ້າງເງື່ອນໄຂ ໃຫ້ໄດ້ຮັບການສຶກສາໃດໜຶ່ງ.

**ມາດຕາ 37 ການພັດທະນາເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການພັດທະນາ ເຍົາວະຊົນລາວ ທີ່ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ ດ້ວຍການ ສ້າງໂອກາດ, ປຸກຈິດສຳນຶກ, ສະໜອງທຶນການສຶກສາ, ສົ່ງເສີມສຸຂະພາບ, ສະໜອງ ຂໍ້ມູນ ຂ່າວສານ ແລະ ໃຫ້ມີຄວາມສະເໝີພາບໃນສັງຄົມ.

**ມາດຕາ 38 ການພັດທະນາເຍົາວະຊົນລາວ ທີ່ພິການ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສະຖານການສຶກສາ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ພິການ ດ້ວຍການ ປຸກຈິດສຳນຶກ, ສ້າງໂອກາດ, ໃຫ້ຄວາມສະເໝີພາບ, ຄວາມອົບອຸ່ນ, ໃຫ້ການສຶກສາທີ່ເທົ່າທຽມ, ສົ່ງເສີມພອນສະຫວັນ ແລະ ສຸຂະພາບໃຫ້ແຂງແຮງ.

**ມາດຕາ 39 ການພັດທະນາເຍົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ ດ້ວຍການ ໃຫ້ ຂໍ້ມູນ ຂ່າວສານ, ສຶກສາອົບຮົມ, ປຸກຈິດສຳນຶກ, ຟື້ນຟູຮ່າງກາຍ, ຈິດໃຈ, ໃຫ້ໄດ້ຮັບການສຶກສາ ແລະ ພັດທະນາຕົນເອງ.

**ມາດຕາ 40 ການພັດທະນາເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສະຖານການສຶກສາ, ຄອບຄົວ, ຍາດພີ່ນ້ອງ, ຜູ້ປົກຄອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການພັດທະນາເຍົາວະຊົນລາວ ທີ່ກຳພ້າ ແລະ ກຳພອຍ ດ້ວຍການສຶກສາອົບຮົມ, ປຸກຈິດສຳນຶກ, ໄດ້ຮັບການຊ່ວຍເຫຼືອ, ໄດ້ຮັບການສຶກສາ ແລະ ໃຫ້ມີໂອກາດພັດທະນາຕົນເອງ.

**ມາດຕາ 41 ການພັດທະນາເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ສູນບຳບັດ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການພັດທະນາ ເຍົາວະຊົນລາວ ທີ່ຕິດສິ່ງເສບຕິດ ດ້ວຍການ ສຶກສາອົບຮົມ, ປຸກຈິດສຳນຶກ, ບຳບັດ, ຟື້ນຟູຮ່າງກາຍ ແລະ ຈິດໃຈ, ຮຽນໜັງສື, ຝຶກວິຊາຊີບ, ອອກກຳລັງກາຍ, ໃຫ້ ຂໍ້ມູນ ຂ່າວສານທີ່ຖືກຕ້ອງ ເພື່ອໃຫ້ກັບຄືນສູ່ສະພາບປົກກະຕິ.

**ມາດຕາ 42 ການພັດທະນາເຍົາວະຊົນລາວ ທີ່ກະທຳຜິດ**

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ຍາດພີ່ນ້ອງ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບ ໃນການພັດທະນາເຍົາວະຊົນລາວ ທີ່ກະທຳຜິດ ດ້ວຍການ ສຶກສາອົບຮົມ, ປຸກຈິດສຳນຶກ, ພັດທະນາດ້ານຮ່າງກາຍ, ມັນສະໝອງ, ຈິດໃຈ ແລະ ເຄື່ອນໄຫວກິດຈະກຳຕ່າງໆ ເພື່ອໃຫ້ເປັນຄົນດີຂອງສັງຄົມ.

## ພາກທີ IV
## ສິດ, ໜ້າທີ່ ແລະ ຜົນປະໂຫຍດ ຂອງເຍົາວະຊົນລາວ

**ມາດຕາ 43 ສິດຂອງເຍົາວະຊົນລາວ**

ເຍົາວະຊົນລາວ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ;
2. ໄດ້ຮັບການ ຮ່ຳຮຽນ, ຝຶກອົບຮົມ, ທັດສະນະສຶກສາ, ບຳລຸງ ແລະ ພັດທະນາທັກສະດ້ານຕ່າງໆ;
3. ໄດ້ຮັບ ຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ;
4. ເຂົ້າຮ່ວມກິດຈະກຳຕ່າງໆ ທີ່ເໝາະສົມ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ໜ້າທີ່ຂອງເຍົາວະຊົນລາວ**

ເຍົາວະຊົນລາວ ມີໜ້າທີ່ ດັ່ງນີ້:

1. ຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງ, ປະຕິບັດຕາມ ຄຳສອນຂອງທ່ານຜູ້ນຳ ແລະ ກົດໝາຍ;
2. ປົກປັກຮັກສາ ສິ່ງແວດລ້ອມ, ຮັກສາວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
3. ເຄື່ອນໄຫວກິລາ-ກາຍຍະກຳ, ສິລະປະ ວັນນະຄະດີ ແລະ ກິດຈະກຳອື່ນ ທີ່ບໍ່ຂັດກັບກົດໝາຍ;
4. ເຄົາລົບນັບຖື ແລະ ມີຄວາມກະຕັນຍູ ຕໍ່ ພໍ່ ແມ່, ຜູ້ປົກຄອງ, ຄອບຄົວ, ຍາດພີ່ນ້ອງ, ຄູ, ອາຈານ ແລະ ຜູ້ອາວຸໂສ;
5. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ຜົນປະໂຫຍດຂອງເຍົາວະຊົນລາວ**

ເຍົາວະຊົນລາວ ໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ໄດ້ຮັບທຶນການສຶກສາ, ຍົກລະດັບຄວາມຮູ້, ຄວາມສາມາດ, ໄດ້ເຂົ້າຮ່ວມເຄື່ອນໄຫວກິດຈະກຳ, ຝຶກອົບຮົມ, ສຳມະນາ, ງານພົບປະ-ຕັ້ງຄ້າຍ ທັງພາຍໃນ ແລະ ຕ່າງປະເທດ ຕາມເງື່ອນໄຂຕົວຈິງ;
2. ໄດ້ຮັບນະໂຍບາຍ, ສະຫວັດດີການສັງຄົມ ແລະ ການຍ້ອງຍໍ ຕາມລະບຽບການ;
3. ໄດ້ຮັບການປົກປ້ອງ ຜົນປະໂຫຍດອັນຊອບທຳຂອງຕົນ ໃນກໍລະນີທີ່ຖືກລະເມີດ;
4. ເຂົ້າເປັນສະມາຊິກຂອງການຈັດຕັ້ງເຍົາວະຊົນທັນວາ ຖ້າຫາກມີເງື່ອນໄຂ, ມາດຕະຖານຄົບຖ້ວນ ແລະ ມີຄວາມຕື່ນຕົວສະໝັກໃຈ.

## ພາກທີ V
## ການຈັດຕັ້ງເຍົາວະຊົນທັນວາ

**ມາດຕາ 46 ການຈັດຕັ້ງເຍົາວະຊົນທັນວາ**

ການຈັດຕັ້ງເຍົາວະຊົນທັນວາ ແມ່ນ ອົງການຈັດຕັ້ງມະຫາຊົນ ຂອງເດັກນ້ອຍລາວ ທີ່ມີ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ນຳພາ ຊີ້ນຳ ໂດຍກົງ ຮອບດ້ານ, ເປັນການຈັດຕັ້ງທີ່ເຕົ້າໂຮມເຍົາວະຊົນລາວຜູ້ຫ້າວຫັນ, ດີເດັ່ນ, ມີຄວາມຕື່ນຕົວສະໝັກໃຈ, ໄດ້ຜ່ານການຝຶກຝົນຫຼໍ່ຫຼອມຈາກຂະບວນການຕົວຈິງ ຂອງມະຫາຊົນ.

ການຈັດຕັ້ງເຍົາວະຊົນທັນວາ ມີ ສາມຂັ້ນ ດັ່ງນີ້:

1. ກອງເຍົາວະຊົນທັນວາ;
2. ໝວດເຍົາວະຊົນທັນວາ;
3. ໝູ່ເຍົາວະຊົນທັນວາ.

**ມາດຕາ 47 ກອງເຍົາວະຊົນທັນວາ**

ກອງເຍົາວະຊົນທັນວາ ແມ່ນ ການຈັດຕັ້ງສູງສຸດ ຂອງການຈັດຕັ້ງເຍົາວະຊົນທັນວາ ຊຶ່ງປະກອບດ້ວຍ ສາມ ຫາ ສີ່ ໝວດ ແລະ ມີເຍົາວະຊົນທັນວາ ແຕ່ ສີ່ສິບສອງ ຫາ ໜຶ່ງຮ້ອຍຊາວ ຄົນ ຕໍ່ໜຶ່ງກອງ.

**ມາດຕາ 48 ໝວດເຍົາວະຊົນທັນວາ**

ໝວດເຍົາວະຊົນທັນວາ ແມ່ນ ການຈັດຕັ້ງຂັ້ນລຸ່ມຖັດຈາກກອງເຍົາວະຊົນທັນວາ ຊຶ່ງປະກອບດ້ວຍ ສອງ ຫາ ສາມ ໝູ່ ແລະ ມີເຍົາວະຊົນທັນວາ ແຕ່ ສິບສີ່ ຫາ ສາມສິບ ຄົນ ຕໍ່ໜຶ່ງໝວດ.

**ມາດຕາ 49 ໝູ່ເຍົາວະຊົນທັນວາ**

ໝູ່ເຍົາວະຊົນທັນວາ ແມ່ນ ການຈັດຕັ້ງຂັ້ນລຸ່ມສຸດ ຂອງການຈັດຕັ້ງເຍົາວະຊົນທັນວາ ຊຶ່ງມີເຍົາວະຊົນທັນວາ ແຕ່ ເຈັດ ຫາ ສິບ ຄົນ ຕໍ່ໜຶ່ງໝູ່.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງເຍົາວະຊົນທັນວາ**

ການຈັດຕັ້ງເຍົາວະຊົນທັນວາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮ່າງຮຽບ ກົດລະບຽບ, ແບບແຜນການຈັດຕັ້ງເຍົາວະຊົນທັນວາ, ຄຳສອນຂອງທ່ານຜູ້ນຳ, ຄຸນລັກສະນະຂອງເຍົາວະຊົນລາວ, ຂໍ້ແຂ່ງຂັນ, ຄຳຂວັນ;

2. ເຕົ້າໂຮມຄວາມສາມັກຄີເຍົາວະຊົນລາວ, ນຳພາ ຊີ້ນຳ ການຈັດຕັ້ງ ແລະ ການເຄື່ອນໄຫວ ກິດຈະກຳຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

3. ປົກປັກຮັກສາສິ່ງແວດລ້ອມ, ຮັກສາວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

4. ຮັບເຍົາວະຊົນລາວຜູ້ຫ້າວຫັນ, ດີເດັ່ນ ແລະ ມີຄວາມຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກເຍົາວະຊົນທັນວາ;

5. ຮັບຜິດຊອບເຍົາວະຊົນທັນວາ, ເຍົາວະຊົນລາວ, ອະນຸຊົນທັນວາ ແລະ ອະນຸຊົນລາວ;

6. ໄດ້ຮັບການຍ້ອງຍໍຕາມລະບຽບການ;

7. ຕິດຕາມ, ສ້າງເຍົາວະຊົນທັນວາ ເພື່ອສະເໜີເຂົ້າເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ຄວາມຮັບຜິດຊອບຂອງການຈັດຕັ້ງລັດ ແລະ ຄອບຄົວ ຕໍ່ເຍົາວະຊົນລາວ

**ມາດຕາ 51 ຄວາມຮັບຜິດຊອບຂອງລັດຖະບານ**

ລັດຖະບານ ມີຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມ ແລະ ສ້າງເງື່ອນໄຂໃຫ້ຂະແໜງການທີ່ກ່ຽວຂ້ອງໃນການສຶກສາອົບຮົມ, ປູກຈິດສຳນຶກ ແລະ ໃຫ້ຂໍ້ມູນ ຂ່າວສານ ແກ່ເຍົາວະຊົນລາວ ໃຫ້ ມີຄຸນສົມບັດ, ມີຄວາມຮູ້, ຄວາມສາມາດ ທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ມີສຸຂະພາບດີ ກາຍເປັນຜູ້ສືບທອດທີ່ດີຂອງປະເທດຊາດ.

ລັດຖະບານ ໃຫ້ການຍ້ອງຍໍ ສົ່ງເສີມ ເຍົາວະຊົນລາວ ທີ່ມີຜົນງານດີເດັ່ນໃນການສຶກສາຮ່ຳຮຽນ, ການເຄື່ອນໄຫວຂະບວນການ, ມີຫົວຄິດປະດິດສ້າງ ແລະ ມີພອນສະຫວັນ.

**ມາດຕາ 52 ຄວາມຮັບຜິດຊອບຂອງຂະແໜງການສຶກສາທິການ ແລະ ກິລາ**

ຂະແໜງການສຶກສາທິການ ແລະ ກິລາ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຊຸກຍູ້, ຊີ້ນຳສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວກິດຈະກຳຕ່າງໆ ຂອງກອງເຍົາວະຊົນທັນວາ;

2. ສຶກສາອົບຮົມເຍົາວະຊົນລາວໃຫ້ກາຍເປັນຜູ້ທີ່ມີຄຸນສົມບັດດີ, ມີຄວາມຮູ້ ຄວາມສາມາດ, ຮຽນດີ ຮຽນເກັ່ງ;

3. ຊຸກຍູ້, ຕິດຕາມ ແລະ ຂະຫຍາຍການຈັດຕັ້ງເຍົາວະຊົນທັນວາ ໃຫ້ທົ່ວເຖິງ ແລະ ເຂັ້ມແຂງ;

4. ອຳນວຍຄວາມສະດວກ ໃນການຈັດຝຶກອົບຮົມວຽກງານເຍົາວະຊົນລາວ ໃຫ້ແກ່ນັກສຶກສາຄູ ໃນຂອບເຂດທົ່ວປະເທດ;

5. ສ້າງ ແລະ ປູກຈິດສຳນຶກໃຫ້ເຍົາວະຊົນລາວຮູ້ຈັກປົກປັກຮັກສາ ສິ່ງແວດລ້ອມ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ຄວາມຮັບຜິດຊອບຂອງຂະແໜງການສາທາລະນະສຸກ**

ຂະແໜງການສາທາລະນະສຸກ ມີຄວາມຮັບຜິດຊອບ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ວຽກງານໂພສະນາການສຸຂະສຶກສາ ແລະ ສຸຂະພາບຈະເລີນພັນ;

2. ໃຫ້ການບໍລິການ ກ່ຽວກັບການໃຫ້ວັກຊິນກັນພະຍາດ ແລະ ປິ່ນປົວສຸຂະພາບໃຫ້ແກ່ເຍົາວະຊົນລາວ;

3. ໃຫ້ຄຳປຶກສາດ້ານສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ ໃຫ້ແກ່ເຍົາວະຊົນລາວ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ຄວາມຮັບຜິດຊອບຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ**

ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງເງື່ອນໄຂໃຫ້ເຍົາວະຊົນລາວ ໄດ້ເຂົ້າເຖິງຂໍ້ມູນກ່ຽວກັບ ການປະກັນສັງຄົມ ແລະ ປະກັນສຸຂະພາບ;

2. ໂຄສະນາ ເຜີຍແຜ່ ໃຫ້ຜູ້ໃຊ້ແຮງງານ ຮັບຮູ້ ເຂົ້າໃຈ ກ່ຽວກັບການນຳໃຊ້ແຮງງານເຍົາວະຊົນລາວ ໃຫ້ຖືກຕ້ອງ ສອດຄ່ອງກັບກົດໝາຍວ່າດ້ວຍແຮງງານ;

3. ໃຫ້ການຊ່ວຍເຫຼືອ, ເບິ່ງແຍງ ແລະ ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ໃນການດູແລເຍົາວະຊົນລາວ ທີ່ຖືກຜົນກະທົບ ຈາກໄພທຳມະຊາດ, ການທຳຮ້າຍຮ່າງກາຍ, ຜູ້ຖືກເຄາະຮ້າຍ ຫຼື ຄອບຄົວຂອງຜູ້ຖືກເຄາະຮ້າຍ ຈາກສິ່ງເສດເຫຼືອສົງຄາມ;

4. ສ້າງສິ່ງເອື້ອອຳນວຍ ໃຫ້ແກ່ການເຄື່ອນໄຫວ, ການຮ່ຳຮຽນ, ການພັກເຊົາ ຂອງເຍົາວະຊົນລາວ ໂດຍສະເພາະເຍົາວະຊົນລາວ ທີ່ ພິການ, ດ້ອຍໂອກາດ, ຖືກປະລະ ແລະ ປະຖິ້ມ, ກຳພ້າ, ກຳພອຍ ແລະ ຖືກເຄາະຮ້າຍ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ຄວາມຮັບຜິດຊອບຂອງຂະແໜງການອື່ນ**

ຂະແໜງການອື່ນ ມີຄວາມຮັບຜິດຊອບ ປະສານສົມທົບ ແລະ ໃຫ້ການຮ່ວມມື ກັບຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາເຍົາວະຊົນລາວ ຕາມພາລະບົດບາດຂອງຕົນ.

**ມາດຕາ 56 ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສຶກສາອົບຮົມລູກຫຼານຂອງຕົນໃຫ້ມີຄຸນສົມບັດ, ກະຕັນຍູຮູ້ບຸນຄຸນ ແລະ ຮັກສາຮີດຄອງ ປະເພນີ, ວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ, ເຄົາລົບ ແລະ ປະຕິບັດກົດໝາຍ;

2. ອຳນວຍຄວາມສະດວກໃຫ້ລູກຫຼານຂອງຕົນ ໄດ້ເຂົ້າໂຮງຮຽນ ແລະ ຮັບການສຶກສາ ຢ່າງຕໍ່ເນື່ອງ;

3. ໃຫ້ຄຳແນະນຳ, ໃກ້ຊິດຕິດແທດ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄຸ້ມຄອງການເຄື່ອນໄຫວຂອງລູກຫຼານ ພ້ອມທັງເປັນແບບຢ່າງໃນການດຳລົງຊີວິດທີ່ຖືກຕ້ອງ;

4. ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ສະຖານການສຶກສາ, ສະໂມສອນ ໃນການຕິດຕາມ ແລະ ສຶກສາອົບຮົມລູກຫຼານຂອງຕົນ.

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 57 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ເຍົາວະຊົນລາວ ເພື່ອຫາຜົນປະໂຫຍດໃຫ້ຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ຂັດຂວາງ, ບັງຄັບ, ນາບຂູ່, ບໍ່ອຳນວຍຄວາມສະດວກໃຫ້ແກ່ເຍົາວະຊົນລາວ ໃນການເຄື່ອນໄຫວທີ່ເປັນປະໂຫຍດຕໍ່ສັງຄົມ;

3. ໂຄສະນາ ຊວນເຊື່ອ ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ, ສ້າງສິ່ງຈູງໃຈ, ຊັກຊວນ, ຊື້ຈ້າງຈອບອອຍ ແລະ ເບື່ອເມົາ ເຍົາວະຊົນລາວ;

4. ໂຄສະນາ, ຂາຍສິ່ງເສບຕິດ, ອາຫານ ແລະ ເຄື່ອງດື່ມທີ່ມີຜົນສະທ້ອນຕໍ່ສຸຂະພາບ ໃຫ້ເຍົາວະຊົນລາວ;

5. ຜະລິດ, ຈຳໜ່າຍ ເຄື່ອງໝາຍການຈັດຕັ້ງເຍົາວະຊົນທັນວາ ໂດຍບໍ່ໄດ້ຮັບອະນຸຍາດ;

6. ປົກປິດ ການກະທຳທີ່ບໍ່ຖືກຕ້ອງ ຂອງເຍົາວະຊົນລາວ;

7. ໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ ແລະ ຈຳແນກໃນທຸກຮູບແບບຕໍ່ເຍົາວະຊົນລາວ;

8. ໃຊ້ແຮງງານເຍົາວະຊົນລາວ ເກີນກຳລັງໃນການປະຕິບັດກິດຈະກຳຕ່າງໆ;

9. ນຳໃຊ້ໂຄງລ່າງພື້ນຖານ ສຳລັບເຍົາວະຊົນລາວ ໂດຍບໍ່ໄດ້ຮັບອະນຸຍາດ;

10. ນຳໃຊ້ເຍົາວະຊົນລາວ ຊື້ ຂາຍ, ຂົນສົ່ງ ສິ່ງເສບຕິດ, ສິ່ງມຶນເມົາ ຫຼື ສິ່ງທີ່ຜິດກົດໝາຍ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 58 ຂໍ້ຫ້າມສຳລັບເຍົາວະຊົນລາວ**

ຫ້າມ ເຍົາວະຊົນລາວ ມີພຶດຕິກຳ ດັ່ງນີ້:

1. ປະລະການຮຽນ, ລະເມີດກົດລະບຽບຂອງໂຮງຮຽນ, ແບ່ງແຍກຄວາມສາມັກຄີ, ຂີ້ລັກ, ງັດແງະ, ສ້າງກຸ່ມແກ້ງ, ອາລະວາດຕີກັນ ແລະ ການກໍ່ຄວາມບໍ່ສະຫງົບໃນສັງຄົມ;

2. ພົວພັນ ສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກອະນາຈານ, ຫຼິ້ນການພະນັນ ແລະ ນຳໃຊ້ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ໃຊ້ ແລະ ໃຫ້ບໍລິການຢູ່ຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ ແລະ ສະຖານທີ່ອື່ນ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ຖືອາວຸດ ຫຼື ວັດຖຸລະເບີດ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 ຂໍ້ຫ້າມສຳລັບການຈັດຕັ້ງເຍົາວະຊົນທັນວາ**

ຫ້າມ ການຈັດຕັ້ງເຍົາວະຊົນທັນວາ ມີພຶດຕິກຳ ດັ່ງນີ້:

1. ເກັບເງິນສະຕິ ເຍົາວະຊົນລາວ;

2. ກີດກັ້ນການເຄື່ອນໄຫວ ທີ່ເປັນການສົ່ງເສີມ ແລະ ພັດທະນາເຍົາວະຊົນລາວ;

3. ປະຕິບັດໜ້າທີ່ໂດຍຂາດຄວາມຮັບຜິດຊອບ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ ວຽກງານເຍົາວະຊົນລາວ
## ໝວດທີ 1
## ການຄຸ້ມຄອງວຽກງານເຍົາວະຊົນລາວ

**ມາດຕາ 60 ອົງການຄຸ້ມຄອງວຽກງານເຍົາວະຊົນລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຄຸ້ມຄອງວຽກງານເຍົາວະຊົນລາວ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຍົາວະຊົນລາວ ປະກອບດ້ວຍ:

1. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
2. ການຈັດຕັ້ງຂອງລັດ;
3. ອົງການຈັດຕັ້ງສັງຄົມ.

**ມາດຕາ 61 ສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ໃນການຄຸ້ມຄອງວຽກງານເຍົາວະຊົນລາວ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານເຍົາວະຊົນລາວ;
2. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ, ປູກຈິດສຳນຶກ ໃຫ້ເຍົາວະຊົນລາວ ມີຄຸນສົມບັດສິນທຳປະຕິວັດ, ນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ ລວມທັງສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນໃຫ້ເຍົາວະຊົນລາວ;
3. ນຳພາ ຊີ້ນຳ, ສ້າງ ແລະ ປັບປຸງການຈັດຕັ້ງເຍົາວະຊົນທັນວາ ໃຫ້ມີຄວາມເຂັ້ມແຂງ;
4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຍົາວະຊົນລາວ;
5. ປະກອບຄຳເຫັນຕໍ່ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນຕົ້ນ ບັນຫາທີ່ກ່ຽວພັນກັບວຽກງານເຍົາວະຊົນລາວ;
6. ປະສານສົມທົບ, ຮ່ວມມື ກັບ ການຈັດຕັ້ງລັດ ແລະ ການຈັດຕັ້ງພາກສ່ວນອື່ນ ໃນການຄຸ້ມຄອງ, ປົກປ້ອງ, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນການພັດທະນາເຍົາວະຊົນລາວ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງຂອງລັດ**

ໃນການຄຸ້ມຄອງວຽກງານເຍົາວະຊົນລາວ ການຈັດຕັ້ງຂອງລັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານເຍົາວະຊົນລາວ ເປັນແຜນການ, ແຜນງານ ແລະ ໂຄງການຂອງຕົນ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບເຍົາວະຊົນລາວ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານເຍົາວະຊົນລາວ;

4. ສ້າງເງື່ອນໄຂ ໃຫ້ການຈັດຕັ້ງເຍົາວະຊົນທັນວາ ມີລາຍຮັບເຂົ້າໃນການເຄື່ອນໄຫວກິດຈະກໍາຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

5. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງກັບເຍົາວະຊົນລາວ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງອົງການຈັດຕັ້ງສັງຄົມ**

ອົງການຈັດຕັ້ງສັງຄົມ ເປັນຕົ້ນ ສະຖານການສຶກສາ, ນິຕິບຸກຄົນ, ມູນນິທິ, ສະໂມສອນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ, ຮ່ວມມື ກັບ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ການຈັດຕັ້ງຂອງລັດ ໃນການຄຸ້ມຄອງ, ປົກປ້ອງ, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃນການພັດທະນາເຍົາວະຊົນລາວ ຕາມພາລະບົດບາດ ຂອງຕົນ.

## ໝວດທີ 2
## ການກວດກາວຽກງານເຍົາວະຊົນລາວ

**ມາດຕາ 64 ອົງການກວດກາວຽກງານເຍົາວະຊົນລາວ**

ອົງການກວດກາວຽກງານເຍົາວະຊົນລາວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເຍົາວະຊົນລາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ ແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 65 ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນ ດັ່ງນີ້:

1. ການນໍາໃຊ້ສິດ, ປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ຂອງອົງການຄຸ້ມຄອງ ວຽກງານເຍົາວະຊົນລາວ ໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາເຍົາວະຊົນລາວ;

2. ການເຄື່ອນໄຫວ, ການກະທໍາ, ການດໍາລົງຊີວິດ, ການພົວພັນສັງຄົມ ຂອງເຍົາວະຊົນລາວ;

3. ການເຄື່ອນໄຫວຂອງການຈັດຕັ້ງເຍົາວະຊົນທັນວາ;

4. ເນື້ອໃນອື່ນ ທີ່ມີຄວາມຈໍາເປັນ.

**ມາດຕາ 66 ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປົກກະຕິ ແລະ ມີກໍານົດເວລາ ທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດກາຕາມ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ຂອງ ຄະນະກວດກາຊາວໜຸ່ມ ແລະ ຄໍາສະເໜີຂອງອົງການກວດກາພາຍນອກ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ ກ່ອນລ່ວງໜ້າ.

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາວຽກງານເຍົາວະຊົນລາວ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ງົບປະມານ, ວັນສ້າງຕັ້ງ ແລະ ສັນຍາລັກຂອງການຈັດຕັ້ງເຍົາວະຊົນທັນວາ

### ມາດຕາ 67 ງົບປະມານ

ງົບປະມານ ທີ່ນຳໃຊ້ເຂົ້າໃນວຽກງານເຍົາວະຊົນລາວ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ກອງທຶນພັດທະນາເຍົາວະຊົນ-ອະນຸຊົນ;
3. ການປະກອບສ່ວນ, ການຊ່ວຍເຫຼືອຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງອົງການຈັດຕັ້ງສາກົນ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

### ມາດຕາ 68 ວັນສ້າງຕັ້ງການຈັດຕັ້ງເຍົາວະຊົນທັນວາ

ວັນສ້າງຕັ້ງການຈັດຕັ້ງເຍົາວະຊົນທັນວາ ແມ່ນ ວັນທີ 2 ທັນວາ 1955. ໃນແຕ່ລະປີ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ເພື່ອທວນຄືນປະຫວັດ ແລະ ມູນເຊື້ອ ຂອງການກຳເນີດ ແລະ ການຂະຫຍາຍຕົວ ຂອງການຈັດຕັ້ງເຍົາວະຊົນທັນວາ.

### ມາດຕາ 69 ສັນຍາລັກຂອງການຈັດຕັ້ງເຍົາວະຊົນທັນວາ

ການຈັດຕັ້ງເຍົາວະຊົນທັນວາ ມີ ທຸງ, ເຄື່ອງໝາຍ, ກາໝາຍ ທີ່ໄດ້ຖືກຮັບຮອງເອົາ ໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 70 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 71 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ XI
# ບົດບັນຍັດສຸດທ້າຍ

**ມາດຕາ 72 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 73 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ຕຸລາ 2023 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ